# ວັງສະຫງວນ ເພື່ອການອະນຸລັກ ປາທຳມະຊາດ ແຂວງຊຽງຂວາງ



2020

## ບົດແນະນຳ

ວັງສະຫງວນ ເປັນແຫລ່ງຜະລິດແລະ ສະຫນອງອາຫານໃຫ້ແກ່ປະຊາຊົນບັນດາເຜົ່າ ດັ່ງນັ້ນ,ໃນແຕ່ລະບ້ານ ທີ່ຕັ້ງຢູ່ລຽບຕາມແມ່ນ້ຳ ສາຍຕ່າງໆ ຈຶ່ງໄດ້ພ້ອມກັນ ສ້າງຕັ້ງວັງສະຫງວນອະນຸລັກປາທຳມະຊາດເພື່ອເປັນແຫລ່ງເພາະພັນຂະຫຍາຍພັນປາຊະນິດຕ່າງໆ ທີ່ຕິດພັນກັບ ການດຳລົງຊີວິດການເປັນຢູ່ປະຈຳວັນ ຂອງປະຊາຊົນບັນດາເຜົ່າ.

## ການຄຸ້ມຄອງວັງສະຫງວນ

- ແຂວງຊຽງຂວາງ ໄດ້ຮັບການສ້າງຕັ້ງວັງສະຫງວນສຳເລັດ 59 ວັງໃນນີ້ ມີວັງສະຫງວນ ຫວງຫ້າມເດັດຂາດ 34 ວັງ ແລະ ວັງສະຫງວນຊົມໃຊ້ 25 ວັງ ຢູ່ 3 ເມືອງຄື: ເມືອງຫນອງແຮດ, ພູກູດ ແລະ ເມືອງຄຳ
- ມີປະຊາກອນທີ່ໄດ້ຮັບຜົນປະໂຫຍດ ຈາກການບໍລິໂພກປາຈາກວັງສະຫງວນມີ ຈຳນວນ 12 ບ້ານ 1,468 ຄອບຄົວ

## ຊະນິດປາທີ່ສຳຄັນ ທີ່ພົບເຫັນ

| | |
|---|---|
| 1. ປາພອມ 5% | 8. ປາບູ່ 2% |
| 2. ປາແສດ 5% | 9. ປາພັ່ນ 3% |
| 3. ປາແກງ 5% | 10. ປາວອກ 3% |
| 4. ປາພຸ້ງ 4% | 11. ປາເຕັດ 2% |
| 5. ປາໄນ 4% | 12. ປາລາດ 3% |
| 6. ປານິນ 4% | 13. ປາມ້ອມ 3% |
| 7. ປາແຂ້ແຍງ 3% | 14. ປາຈາດ 4% |
| 15. ປາເຜົ້າ 3% | 25. ອ່ຽນ 2:%. |
| 16. ປາພິ 5% | 26. ປາກົດເຫລືອງ 2% |
| 17. ປາຂີ້ຕຸນ 3% | 27. ປາເຄິງ 1% |
| 18. ປາມັນ 3% | 28. ປາຂ້າມຂ້າງ 2% |
| 19. ປາຄໍ່ 2% | 29. ປາຊິວຫົວເບີດ 2% |
| 20. ປາດຸກ 3% | 30. ປາຊິວແຖບກວ້າງ 2% |
| 21. ປາກັ້ງ 3% | 31. ປາຊິວດອກເຂົ້າ 2% |
| 22. ປາຄີງ 5% | 32. ປາຊິວເຂົ້າສານ 2% |
| 23.ປາດູດຝຸ່ນ 3% | 33. ປາແຂ້ເຫລືອງ 1% |
| 24.ປາພອນຊາຍ 3% | 34.ປາຝາ 1% |

- ຊະນິດປາທີ່ພົບເຫັນໃຫຍ່ກວ່າໝູ່ ແມ່ນປາເຄິງ ແລະ ຊະນິດປາທີ່ມີຂະຫນາດປານກາງແມ່ນ ປາພຸ້ງ ແລະ ປາທີ່ນ້ອຍກວ່າໝູແມ່ນປາບູ່.
- ຊະນິດປາທີ່ພົບເຫັນມາຢູ່ໃໝ່ໃນແມ່ນ້ຳ ແມ່ນ ປາແສດ, ປາແກງຫວຽດນາມ ແລະ ປາດູດຝຸ່ນ.
- ຊະນິດປາທີ່ມີໃນແມ່ນ້ຳ ແຕ່ປະຈຸບັນ ແມ່ນໄດ້ສູນພັນໄປແລ້ວ ແມ່ນ ປາເຕັດ.
- ລາຍຮັບຈາກການຫາປາ ໃນຈຳນວນ 12 ບ້ານເປົ້າໝາຍໃນແຕ່ລະປີແມ່ນໄດ້ເກັບກຳຂໍ້ມູນການຫາປາຂອງປະຊາຊົນທີ່ຢູ່ນອກຂອບເຂດຫວງຫ້າມຂອງວັງສະຫງວນໃນ 12 ບ້ານຈຳນວນ 1,468 ຄອບຄົວ ພວກເຮົາໄດ້ສູ່ມເກັບກຳຂໍ້ມູນຈຳນວນ 120 ຄອບຄົວ ໃນປີຫນຶ່ງສາມາດຫາປາໄດ້ 4,212 ກິໂລ ໃນນີ້ ຂາຍຈຳນວນ 1,056 ກິໂລ, ບໍລິໂພກພາຍໃນຄອບຄົວຈຳນວນ 3,127 ກິໂລ,ຖ້າຄິດໄລ່ເປັນເງິນຈາກການຫາປາໄດ້ແມ່ນ 126,775,000 ກີບ, ສະເລ່ຍແລ້ວຄອບຄົວຫນຶ່ງຈະຫາປາໄດ້ 35ກິໂລຕໍ່ປີ ຖ້າຄິດໄລ່ເປັນລາຍຮັບແມ່ນ 1,000,000 ກີບ ໃນການຫາປາຕາມທຳມະຊາດ.



## ກົດລະບຽບວັງສະຫງວນປາ

**ຂໍ້ຫ້າມ**:

1.ຫ້າມບໍ່ໃຫ້ຫາປາໃນຂອບເຂດວັງສະຫງວນໃນທຸກຮູບແບບຢ່າງເດັດຂາດ.

2. ຫ້າມບໍ່ໃຫ້ມີການຂຸດຄົ້ນເອົາແຮ່, ຊາຍ, ຫີນ ແລະ ອື່ນໆທີ່ຈະເປັນຜົນກະທົບຕໍ່ປາ, ສິ່ງແວດລ້ອມໃນວັງສະຫງວນ.

3. ຫ້າມບໍ່ໃຫ້ຖິ້ມຂີ້ເຫຍື້ອສິ່ງເສດເຫຼືອຕ່າງໆເຊັ່ນວ່າ: ເສດແກ້ວ, ເຫຼັກ, ຖົງຢາງປາລາສະຕິກ, ປ່ອງຢາຂ້າຫຍ້າ ແລະ ຊະນິດວັດຖຸຕ່າງໆທີ່ຈະເປັນອັນຕະລາຍຕໍ່ປາ ແລະ ສິ່ງແວດລ້ອມລົງໃນວັງສະຫງວນຢ່າງເດັດຂາດ.

6. ຫ້າມບໍ່ໃຫ້ຖາງປ່າ, ຈູດປ່າ, ສີດຢາຂ້າຫຍ້າ, ຢາຂ້າແມງໄມ້ໃນບໍລິເວນ 30 ແມັດ ອ້ອມຂ້າງວັງສະຫງວນ.

7. ຫ້າມບໍ່ໃຫ້ມີການກໍ່ສ້າງເຮືອນ, ຮ້ານອາຫານ, ເຮືອນແພຢູ່ໃນແມ່ນ້ຳ ແລະ ການບໍລິການອື່ນໆໃນຂອບເຂດວັງສະຫງວນໂດຍບໍ່ໄດ້ຮັບອະນຸຍາດ  ຈາກບ້ານ ແລະ ພາກສ່ວນກ່ຽວຂ້ອງຢ່າງເດັດຂາດ.





**ໂອກາດ**

- ຂະຫຍາຍ ການສ້າງຕັ້ງວັງສະຫງວນປາໄປເມືອງອື່ນໆທີ່ມີເງື່ອນໄຂ
- ສ້າງເປັນວັງສະຫງວນສຳຫລັບ ການທ່ອງທ່ຽວຊົມປາ
- ຈຳກັດການປ່ອຍປາຊະນິດອື່ນໆທີ່ບໍ່ແມ່ນປາທຳມະຊາດລົງສູ່ແມ່ນ້ຳ ວັນປ່ອຍປາແຫ່ງຊາດ)

